# ກອງປະຊຸມຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ



ໃນວັນທີ 08 ມັງກອນ 2024 ຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ (ຄະນະ 769/ທຫລ) ໄດ້ດຳເນີນກອງປະຊຸມຄັ້ງທີ 03 (ປະຈຳເດືອນ ທັນວາ ປີ 2023) ເພື່ອຄົ້ນຄວ້າພິຈາລະນາ ການສະເໜີຂໍຮັບນະໂຍບາຍສົມທົບດອກເບ້ຍຂອງຫົວໜ່ວຍທຸລະກິດ ຜ່ານທະນາຄານທຸລະກິດ ໂດຍການເປັນປະທານຂອງ ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຫົວໜ້າຄະນະຮັບຜິດຊອບ ພ້ອມດ້ວຍຄະນະ ເຂົ້າຮ່ວມ. ກອງປະຊຸມຄະນະຮັບຜິດຊອບຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໃນຄັ້ງນີ້, ໄດ້ລາຍງານຜົນການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໃນປີ 2023, ສະຫຼຸບຕີລາຄາບັນດາຂໍ້ຄົງຄ້າງ-ຂໍ້ສະເໜີຕ່າງໆ ເພື່ອຄົ້ນຄວ້າປັບປຸງກົນໄກການເຮັດວຽກຮ່ວມກັນ ໃຫ້ສອດຄ່ອງ, ວ່ອງໄວ ແລະ ຮັບປະກັນໄດ້ປະສິດທິຜົນຂອງນະໂຍບາຍ. ນອກນັ້ນ, ຍັງໄດ້ວາງແຜນການປີ 2024 ພ້ອມທັງພິຈາລະນາການສະເໜີຂໍຮັບນະໂຍບາຍສິນເຊື່ອຂອງຫົວໜ່ວຍທຸລະກິດຈຳນວນໜຶ່ງ.

ຮອດວັນທີ 31 ທັນວາ 2023, ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ໄດ້ຮັບການສະເໜີຂໍຮັບການສົມທົບດອກເບ້ຍ ຈຳນວນ 81 ຫົວໜ່ວຍທຸລະກິດ ໂດຍຜ່ານ 05 ທະນາຄານທຸລະກິດ: ໃນນັ້ນ ສາມາດສຳເລັດການຄົ້ນຄວ້າ ແລະ ຜ່ານການພິຈາລະນາຂອງຄະນະ 769/ທຫລ ຈຳນວນ 13 ຫົວໜ່ວຍທຸລະກິດ (ຊຶ່ງມີ 2 ຫົວໜ່ວຍໄດ້ສຳເລັດການເຊັນສັນຍາ ແລະ ໄດ້ຮັບການສົມທົບດອກເບ້ຍ, 1 ຫົວໜ່ວຍ ບໍ່ຜ່ານເງື່ອນໄຂ ແລະ 10 ຫົວໜ່ວຍ ກຳລັງຄົ້ນຄວ້າ ແລະ ລໍຖ້າການຢັ້ງຢືນຂະແໜງການເປົ້າໝາຍຈາກພາກສ່ວນກ່ຽວຂ້ອງ) ແລະ 68 ຫົວໜ່ວຍທຸລະກິດ ແມ່ນ

ຍັງຢູ່ຂັ້ນຕອນການຄົ້ນຄວ້າ ແລະ ຮຽກເອກະສານທີ່ຍັງບໍ່ຄົບຖ້ວນນຳ ທະນາຄານທຸລະກິດ ຕື່ມ ຊຶ່ງເຫັນວ່າຍັງບໍ່ທັນມີຄວາມຄືບໜ້າຕາມລະດັບຄາດໝາຍເທົ່າທີ່ຄວນ ໂດຍມີສາເຫດມາຈາກຫຼາຍປັດໄຈ ໂດຍສະເພາະຂອດການປະສານງານພາຍໃນຄະນະ, ຂອດການປະກອບເອກະສານຂອງທະນາຄານທຸລະກິດ ແລະ ການສະເໜີຈາກຫົວໜ່ວຍທຸລະກິດ. ສະນັ້ນ, ໃນປີ 2024 ທາງຄະນະ 769/ທຫລ ຈະເອົາໃຈໃສ່ວຽກງານເຜີຍແຜ່ ແລະ ລົງທົບທວນຕິດຕາມການຈັດຕັ້ງປະຕິບັດ ໃຫ້ກັບຂະແໜງການກ່ຽວຂ້ອງ, ລົງເລິກຮ່ວມເຮັດວຽກກັບທະນາຄານທຸລະກິດ ທີ່ເຂົ້າຮ່ວມນະໂຍບາຍ ແລະ ປັບປຸງຂອດການປະສານງານພາຍໃນ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງນະໂຍບາຍ ແນໃສ່ປະກອບສ່ວນສົ່ງເສີມການຜະລິດພາຍໃນ, ສ້າງວຽກເຮັດງານທຳ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບມະຫາພາກດ້ານການເງິນ-ເງິນຕາ ໃຫ້ເຂັ້ມແຂງ ແລະ ການພັດທະນາເສດຖະກິດ ໃຫ້ມີການຂະຫຍາຍຕົວແບບຍືນຍົງ.




ຂ່າວ: ກົມບໍລິການທະນາຄານ